ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ທ່ານ ສອນໄຊ ສິດພະໄຊ ຮອງຜູ້ວ່າການ ທຫລ ຢ້ຽມຢາມທະນາຄານແຫ່ງ ສປປ ລາວ ພາກໃຕ້ ທີ່ແຂວງຈຳປາສັກ




ໃນຕອນເຊົ້າຂອງວັນທີ 19 ພຶດສະພາ 2016, ທ່ານ ສອນໄຊ ສິດພະໄຊ ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ ພ້ອມດ້ວຍຄະນະ ໄດ້ລົງມາຢ້ຽມຢາມ ແລະ ເຄື່ອນໄຫວປະຕິບັດວຽກງານຢູ່ແຂວງຈຳປາສັກ ເປັນເວລາ 1 ວັນ ໂດຍໄດ້ຮັບການຕ້ອນຮັບຢ່າງອົບອຸ່ນຈາກທ່ານ ນະ ຈັນຕະລີວົງ ຫົວໜ້າ ທຫລ ພາກໃຕ້ ທີ່ແຂວງຈຳປາສັກ ພ້ອມດ້ວຍຄະນະ ແລະ ບັນດາຫົວໜ້າທະນາຄານທຸລະກິດຢູ່ແຂວງຈຳປາສັກ.

ຈຸດປະສົງຂອງການລົງມາຢ້ຽມຢາມ ແລະ ເຮັດວຽກໃນເທື່ອນີ້ ແມ່ນເພື່ອນຳເອົາເນື້ອໃນຈິດໃຈຂອງມະຕິກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກປະຊາຊົນປະຕິວັດລາວ ກໍຄືມະຕິກອງປະຊຸມໃຫຍ່ຂອງອົງຄະນະພັກ ທຫລ ເພື່ອມາເຜີຍແຜ່ໃຫ້ແກ່ບັນດາສາຂາທະນາຄານ ຢູ່ທົ່ວ 04 ແຂວງພາກໃຕ້ ໄດ້ຮັບຮູ້ ແລະ ເລີ່ມລົງມືປະຕິບັດແຕ່ຫົວທີ. ພ້ອມດຽວກັນນັ້ນ, ທ່ານຍັງໄດ້ເນັ້ນໜັກເຖິງບັນດາທະນາຄານທຸລະກິດລັດ ທີ່ຕັ້ງຢູ່ທົ່ວ 04 ແຂວງພາກໃຕ້ ໃຫ້ເອົາໃຈໃສ່ສ້າງຄວາມເຂັ້ມແຂງ ໃນການປະຕິບັດໜ້າທີ່ວຽກງານຂອງຕົນໃຫ້ມີປະສິດທິພາບ, ປະສິດທິຜົນ ເພື່ອເຮັດໃຫ້ລະບົບການເງິນ-ທະນາຄານມີຄວາມເຂັ້ມແຂງ ສາມາດເຊື່ອມຕົວໄດ້ຕາມມາດຖານທະນາຄານອາຊຽນ ເພື່ອເປັນການປະກອບສ່ວນຊຸກຍູ້ໃຫ້ເສດຖະກິດຂອງທ້ອງຖິ່ນບັນດາແຂວງ ໃຫ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ ສາມາດປະກອບສ່ວນເຂົ້າໃນການຫຼຸດຜ່ອນຄວາມທຸກຍາກ ແລະ ຍົກສູງຊີວິດການເປັນຢູ່ຂອງປະຊາຊົນ ໃຫ້ດີຂຶ້ນເລື້ອຍໆ.




*ຂ່າວ-ພາບ: ໄກສອນ ບຸດສະດີ*

*ເງິນກີບຄືກຽດສັກສີຂອງຄົນລາວ*